# ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ** ເລກທີ 205 /ນຍ

# ດຳລັດ

## ວ່າດ້ວຍການຄຸ້ມຄອງ ການສົ່ງອອກ ແລະ ການນຳເຂົ້າ

- ອີງຕາມກົດໝາຍວ່າດ້ວຍລັດຖະບານສະບັບເລກທີ 01/95,ລົງວັນທີ 8 ມີນາ 1995;
- ອີງຕາມກົດໝາຍວ່າດ້ວຍທຸລະກິດສະບັບເລກທີ 03/94/ສພຊ, ລົງວັນທີ 18 ກໍລະກົດ 1994;
- ອີງຕາມກົດໝາຍພາສີສະບັບເລກທີ 04/94, ລົງວັນທີ 18 ກໍລະກົດ 1994;
- ອີງຕາມ ການສະເໜີຂອງລັດຖະມົນຕີວ່າການກະຊວງການຄ້າ ສະບັບເລກທີ 1165/ ກຄ.ຫກ, ລົງວັນທີ 09 ຕຸລາ 2001;
- ອີງຕາມມະຕິຕົກລົງຂອງກອງປະຊຸມລັດຖະບານ ຄັ້ງວັນທີ 25 ທັນວາ 2000.

**ນາຍົກລັດຖະມົນຕີອອກດຳລັດ:**

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງດຳລັດ**

ດຳລັດສະບັບນີ້ມີໜ້າທີ່ກຳນົດລະບຽບການກ່ຽວກັບການຄຸ້ມຄອງ ການສົ່ງອອກ ແລະ ການນຳເຂົ້າສິນຄ້າເຄື່ອງຂອງ ໃຫ້ສອດຄ່ອງກັບລະບຽບກົດໝາຍ, ແນໃສ່ສ້າງທຸກເງື່ອນໄຂ ເພື່ອສົ່ງເສີມການສົ່ງອອກ, ຄຸ້ມຄອງການນຳເຂົ້າຢ່າງສົມເຫດສົມຜົນ, ສົ່ງເສີມການພົວພັນຊື້ຂາຍກັບຕ່າງປະເທດ, ກ້າວເຂົ້າສູ່ລະບົບການຄ້າສາກົນເທື່ອລະກ້າວ, ຊຸກຍູ້ການຜະລິດ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ ສັງຄົມຂອງຊາດ.

**ມາດຕາ 2. ນິຍາມ**

*"ການສົ່ງອອກ"* ໝາຍເຖິງການສົ່ງສິນຄ້າເຄື່ອງຂອງໄປຍັງປະເທດໃດໜຶ່ງຈາກສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

*"ການນຳເຂົ້າ"* ໝາຍເຖິງການນຳສິນຄ້າເຄື່ອງຂອງເຂົ້າມາຍັງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈາກປະເທດໃດໜຶ່ງ.

ມາດຕາ 3. ຫຼັກການພື້ນຖານຂອງການຈັດຕັ້ງ ແລະການເຄື່ອນໄຫວ

ທຸກການຈັດຕັ້ງ ແລະ ການເຄື່ອນໄຫວເພື່ອນຳເຂົ້າ ແລະ ສົ່ງອອກສິນຄ້າເຄື່ອງຂອງຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕ້ອງປະຕິບັດຕາມດຳລັດສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ.

## ໝວດທີ II
## ການຄວບຄຸມສິນຄ້າເຄື່ອງຂອງ, ສິນຄ້າເຄື່ອງຂອງທີ່ຄວບຄຸມການນຳເຂົ້າ ແລະ ການສົ່ງອອກ

ມາດຕາ 4. ການຄວບຄຸມສິນຄ້າເຄື່ອງຂອງນຳເຂົ້າ ແລະ ສົ່ງອອກ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສົ່ງເສີມການສົ່ງອອກ ແລະ ການນຳເຂົ້າທຸກປະເພດສິນຄ້າ ເຄື່ອງຂອງ ເວັ້ນເສຍແຕ່ສິນຄ້າເຄື່ອງຂອງທີ່ລັດຄວບຄຸມ ຕາມດຳລັດສະບັບນີ້ ຫລື ຕາມລະບຽບກົດຫມາຍອື່ນທີ່ກ່ຽວຂ້ອງ.

ການຄວບຄຸມສິນຄ້າເຄື່ອງຂອງນຳເຂົ້າ ແລະ ສົ່ງອອກ ຕາມດຳລັດສະບັບນີ້ ແມ່ນການປະຕິບັດມາດຕະການໃດຫນຶ່ງ ຕໍ່ປະເພດສິນຄ້າໃດຫນຶ່ງເມື່ອເຫັນວ່າຈຳເປັນ ເພື່ອສະເຖຍລະພາບດ້ານເສດຖະກິດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງ ສັງຄົມ, ປົກປັກຮັກສາ ຮີດຄອງປະເພນີ ແລະ ວັດທະນະທຳ ອັນດີງາມຂອງຊາດ ແລະ ເພື່ອປົກປ້ອງຜົນປະໂຫຍດດ້ານອື່ນໆ ຂອງລັດ ແລະ ສັງຄົມ.

ການຄວບຄຸມ ການນຳເຂົ້າທີ່ກ່າວມານີ້ແມ່ນ ເພື່ອປົກປ້ອງການຜະລິດພາຍໃນ ແລະ ຜູ້ຊົມໃຊ້, ປ້ອງກັນບໍ່ໃຫ້ມີການປັ່ນປ່ວນສິນຄ້າ ແລະ ລາຄາ ພາຍໃນປະເທດ, ດັດສົມການດຸນດ່ຽງສິນຄ້າ ເຄື່ອງຂອງນຳເຂົ້າ ແລະ ສົ່ງອອກ.

ສ່ວນການຄວບຄຸມ ການສົ່ງອອກ ແມ່ນເພື່ອປ້ອງກັນການຂາດແຄນ ແລະ ເພື່ອສະສົມສິນຄ້າເຄື່ອງຂອງໄວ້ພາຍໃນປະເທດ, ຮັບປະກັນການປະຕິບັດການສົ່ງອອກສິນຄ້າບາງປະເພດໃຫ້ສອດຄ່ອງ ກັບການ ຕົກລົງ ລະຫວ່າງປະເທດທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເປັນພາຄີ, ສະຫງວນ ແລະ ອະນຸລັກບາງປະເພດສິນຄ້າ ຕາມລະບຽບກົດຫມາຍ.

ມາດຕາ 5. ມາດຕະການຄວບຄຸມ

ການຄວບຄຸມສິນຄ້າເຄື່ອງຂອງນຳເຂົ້າ ແລະ ສົ່ງອອກ ອາດຈະຖືກປະຕິບັດ ດ້ວຍມາດຕະການໃດຫນຶ່ງລຸ່ມນີ້:

- ຫ້າມນຳເຂົ້າ ຫລື ສົ່ງອອກ;
- ໃຫ້ຂໍອະນຸຍາດ ກ່ອນນຳເຂົ້າ ຫລື ສົ່ງອອກ;
- ໃຫ້ປະກອບເອກະສານ ຢັ້ງຢືນແຫລ່ງກຳເນີດສິນຄ້າ, ຢັ້ງຢືນຄຸນນະພາບ ຫຼື ອື່ນໆ ຂອງສິນຄ້າເຄື່ອງຂອງນຳເຂົ້າ ຫລື ສົ່ງອອກ ຕາມການຕົກລົງ ຫຼື ຕາມປະເພນີປະຕິບັດ ຂອງການຄ້າລະຫວ່າງປະເທດ;
- ຫ້າມ ຫລື ຈຳກັດການປະກອບທຸລະກິດນຳເຂົ້າ ຫລື ສົ່ງອອກບາງປະເພດສິນຄ້າ;
- ກຳນົດເປົ້າໝາຍຫົວໜ່ວຍທຸລະກິດ ທີ່ຈະໄດ້ຮັບການຂຶ້ນ ທະບຽນວິສະຫະກິດ;
- ກຳນົດໃຫ້ເສຍຄ່າທຳນຽມນຳເຂົ້າ ຫລື ສົ່ງອອກ;

- ກຳນົດຄຸນນະພາບ ສິນຄ້າ ເຄື່ອງຂອງ ນຳເຂົ້າ ຫລື ສົ່ງອອກ ລວມທັງຈຳນວນ, ປະລິມານບັນຈຸ, ປະເພດ, ຊະນິດ, ຂະໜາດ, ນ້ຳໜັກ, ລາຄາ, ຊື່ ຫຼື ເຄື່ອງໝາຍການຄ້າ, ແຫລ່ງກຳເນີດສິນຄ້າ ແລະ ປະເທດທີ່ສົ່ງອອກໄປຂາຍ ຫຼື ນຳເຂົ້າ;
- ນຳໃຊ້ມາດຕະການອື່ນໆ ທີ່ເຫັນວ່າຈຳເປັນເພື່ອຄຸ້ມຄອງການນຳເຂົ້າ ແລະ ສົ່ງອອກ, ເຊັ່ນ: ແຜນດຸນດ່ຽງສິນຄ້າ, ການນຳໃຊ້ມາດຕະການ ພາສີ-ອາກອນ, ການຈັດຕັ້ງກຸ່ມ ຫລື ສະມາຄົມ.

ມາດຕະການ ຄວບຄຸມໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ ໃນມາດຕານີ້ ໃຫ້ຍົກເລີກ ຖ້າວ່າໃນ ໄລຍະເວລາໃດໜຶ່ງ ເງື່ອນໄຂຫາກຂັດກັບ ລະບຽບກົດໝາຍ, ລະບອບ ການຄ້າສາກົນ ທີ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໄດ້ໃຫ້ສັດຕະຍາບັນ ຫລື ເປັນສະມາຊິກ.

## ມາດຕາ 6. ສິນຄ້າເຄື່ອງຂອງທີ່ຄວບຄຸມ

ສິນຄ້າເຄື່ອງຂອງທີ່ຄວບຄຸມແມ່ນປະເພດສິນຄ້າເຄື່ອງຂອງ ຊຶ່ງລັດປະຕິບັດມາດຕະການຄວບຄຸມການນຳເຂົ້າ ແລະ ການສົ່ງອອກ ຕາມທີ່ໄດ້ບົ່ງໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້.

ລາຍການສິນຄ້າ ເຄື່ອງຂອງທີ່ລັດຄວບຄຸມ ອາດມີການປ່ຽນແປງ ຕາມເງື່ອນໄຂຄວາມ ຈຳເປັນ ແລະຄວາມເໝາະສົມໃນແຕ່ລະໄລຍະ.

ກະຊວງການຄ້າ ເປັນຜູ້ກຳນົດ, ຍົກເລີກລາຍການສິນຄ້າເຄື່ອງຂອງທີ່ຄວບຄຸມ ແລະ ນຳໃຊ້ມາດຕະການຄວບຄຸມລະອຽດ ຕໍ່ແຕ່ລະປະເພດສິນຄ້າເຄື່ອງຂອງ ໃນແຕ່ລະໄລຍະ, ເວັ້ນເສັຍແຕ່ປະເພດສິນຄ້າເຄື່ອງຂອງ ທີ່ຂະແໜງການອື່ນຄວບຄຸມ ຫຼື ມີມາດຕະການຄວບຄຸມອື່ນແລ້ວ.

## ມາດຕາ 7. ສິນຄ້າເຄື່ອງຂອງທີ່ຂະແໜງການອື່ນຄວບຄຸມ

ສິນຄ້າເຄື່ອງຂອງທີ່ຂະແໜງການອື່ນຄວບຄຸມແມ່ນປະເພດສິນຄ້າເຄື່ອງຂອງທີ່ຢູ່ໃນຂອບເຂດການ ຄຸ້ມຄອງໂດຍກົງຂອງບັນດາຂະແໜງການທີ່ກ່ຽວຂ້ອງ. ກ່ອນນຳເຂົ້າ ຫຼື ສົ່ງອອກ ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກຕ້ອງປະຕິບັດ ຕາມມາດຕະການຄວບຄຸມຊຶ່ງຂະແໜງການດັ່ງກ່າວວາງອອກ.

ປະເພດສິນຄ້າເຄື່ອງຂອງ ແລະ ມາດຕະການຄວບຄຸມລະອຽດທີ່ໄດ້ກ່າວໄວ້ໃນວັກ 1 ເທິງນີ້ ແມ່ນຂະແໜງການທີ່ກ່ຽວຂ້ອງເປັນຜູ້ກຳນົດ ແລະ ປະກາດໃຊ້ຕາມຄວາມຈຳເປັນ ແລະ ຄວາມເໝາະສົມ ແລ້ວ ແຈ້ງບັນຊີສິນຄ້າເຄື່ອງຂອງເປັນລາຍລັກອັກສອນໃຫ້ກະຊວງການຄ້າເພື່ອລວບລວມເຂົ້າໃນບັນຊີລາຍການ ສິນຄ້າເຄື່ອງຂອງຄວບຄຸມຂອງລັດ.

ໃຫ້ກະຊວງການຄ້າແຈ້ງບັນຊີດັ່ງກ່າວນີ້ໃຫ້ບັນດາຫົວໜ່ວຍທຸລະກິດ ແລະ ຂະແໜງການທີ່ກ່ຽວຂ້ອງຊາບ.

## ມາດຕາ 8. ສິນຄ້າເຄື່ອງຂອງທີ່ຕ້ອງຂໍອະນຸຍາດ

ສິນຄ້າເຄື່ອງຂອງທີ່ຕ້ອງຂໍອະນຸຍາດ ກ່ອນການນຳເຂົ້າ ຫລື ການສົ່ງອອກ ປະກອບດ້ວຍສິນຄ້າທີ່ລັດເກືອດຫ້າມການນຳເຂົ້າ ຫລື ການສົ່ງອອກ ແລະ ສິນຄ້າເຄື່ອງຂອງບາງປະເພດທີ່ລັດຄວບຄຸມ.

ມອບໃຫ້ກະຊວງການຄ້າ ເປັນຜູ້ອອກອະນຸຍາດ ແລະ ວາງລະບຽບການ ໃນການຂໍອະນຸຍາດ. ແຕ່ກ່ອນການອອກອະນຸຍາດນຳເຂົ້າ ຫລື ສົ່ງອອກສິນຄ້າເກືອດຫ້າມໃນແຕ່ລະຄັ້ງ ກະຊວງການຄ້າຕ້ອງປະສານກັບຂະແໜງການທີ່ກ່ຽວຂ້ອງ ແລະ ຕ້ອງໄດ້ຮັບຄຳເຫັນດີ ຈາກນາຍົກລັດຖະມົນຕີເສັຍກ່ອນ.

## ໝວດທີ III
## ຜູ້ນຳເຂົ້າ ແລະ ຜູ້ສົ່ງອອກ

**ມາດຕາ 9. ຜູ້ນຳເຂົ້າ**

ຜູ້ນຳເຂົ້າປະກອບດ້ວຍ:

- ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຕາມດຳລັດສະບັບນີ້. ການນຳເຂົ້າສິນຄ້າເຄື່ອງຂອງ ຂອງຫົວໜ່ວຍທຸລະກິດດັ່ງກ່າວນີ້ ເປັນ ການນຳເຂົ້າ ເພື່ອຈຳໜ່າຍ ຢູ່ພາຍໃນປະເທດ;
- ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນ ວິສາຫະກິດ ເພື່ອດຳເນີນທຸລະກິດໃນຂະແໜງການໃດໜຶ່ງ ຊຶ່ງສາມາດນຳເຂົ້າສິນຄ້າບາງປະເພດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ເພື່ອຮັບໃຊ້ເປົ້າໝາຍສະເພາະ ດັ່ງທີ່ໄດ້ບົ່ງໄວ້ ໃນມາດຕາ 18 ຂອງດຳລັດສະບັບນີ້.

**ມາດຕາ 10. ຜູ້ສົ່ງອອກ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນ ວິສາຫະກິດໃດໜຶ່ງ ລ້ວນແຕ່ສາມາດດຳເນີນທຸລະກິດ ການຄ້າຂາອອກໄດ້.

**ມາດຕາ 11. ຜູ້ນຳເຂົ້າ ຫລື ຜູ້ນຳອອກເຄື່ອງຂອງ**

ຜູ້ນຳເຂົ້າ ຫລື ຜູ້ນຳອອກເຄື່ອງຂອງແມ່ນບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ຮັບອະນຸຍາດ ຫລື ມີສິດຕາມກົດໝາຍພາສີ ໃນການນຳເຂົ້າ ຫຼື ນຳອອກເຄື່ອງຂອງບາງປະເພດ ແລະ ເປັນບາງຄັ້ງຄາວ ໂດຍບໍ່ມີຈຸດປະສົງທາງການຄ້າ.

## ໝວດທີ IV
## ການສ້າງຕັ້ງ ແລະ ການເຄື່ອນໄຫວ ຂອງ ຫົວໜ່ວຍທຸລະກິດການຄ້າຂາອອກ ແລະ ຂາເຂົ້າ

**ມາດຕາ 12. ການສ້າງຕັ້ງຫົວໜ່ວຍທຸລະກິດການຄ້າຂາເຂົ້າ**

ບຸກຄົນ ຫຼືນິຕິບຸກຄົນທີ່ມີຈຸດປະສົງສ້າງຕັ້ງຫົວໜ່ວຍທຸລະກິດການຄ້າຂາເຂົ້າ ຕາມທີ່ໄດ້ບົ່ງໄວ້ໃນວັກ 1 ຂອງມາດຕາ 9 ເທິງນີ້, ຕ້ອງຍື່ນຄຳຮ້ອງຂໍສ້າງຕັ້ງ ແລະ ຂຶ້ນທະບຽນວິສາຫະກິດນຳຂະແໜງການຄ້າ ແລະ ຈົດທະບຽນອາກອນນຳຂະແໜງການເງິນ.

**ມາດຕາ 13. ການສ້າງຕັ້ງຫົວໜ່ວຍທຸລະກິດການຄ້າຂາອອກ**

ທຸກຫົວໜ່ວຍທຸລະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ເທິງນີ້ ລ້ວນແຕ່ແມ່ນຫົວໜ່ວຍທຸລະກິດການຄ້າຂາອອກ.

ສຳລັບຜູ້ທີ່ບໍ່ໄດ້ຂຶ້ນທະບຽນວິສາຫະກິດຕາມທີ່ໄດ້ກ່າວໄວ້ໃນວັກ 1 ເທິງນີ້ ຫາກມີຈຸດປະສົງດຳເນີນທຸລະກິດການຄ້າຂາອອກ ໃຫ້ປະຕິບັດຕາມຂັ້ນຕອນການຂໍສ້າງຕັ້ງທີ່ໄດ້ກຳນົດໄວ້ ໃນມາດຕາ 12 ຂອງດຳລັດສະບັບນີ້.

ມາດຕາ 14. ຮູບການຈັດຕັ້ງທຸລະກິດ.

ຮູບການຈັດຕັ້ງທຸລະກິດການຄ້າຂາອອກ, ຂາເຂົ້າ ອາດຈະຈັດຕັ້ງຕາມປະເພດ, ຮູບການ ແລະ ຮູບແບບທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກິດ.

ມາດຕາ 15. ທຶນຈົດທະບຽນ

ທຶນຈົດທະບຽນສຳລັບການຍື່ນຄຳຮ້ອງຂໍສ້າງຕັ້ງຫົວໜ່ວຍທຸລະກິດການຄ້າຂາອອກ, ຂາເຂົ້າ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກິດ, ເວັ້ນເສຍແຕ່ ການດຳເນີນທຸລະກິດການຄ້າຂາອອກ, ຂາເຂົ້າບາງປະເພດສິນຄ້າທີ່ລະບຽບກົດໝາຍໄດ້ກຳນົດທຶນຈົດທະບຽນໄວ້ສູງກວ່ານີ້.

ມາດຕາ 16. ສິນຄ້າທີ່ອະນຸຍາດໃນໃບທະບຽນ

ໃນເວລາຂໍຂຶ້ນທະບຽນວິສາຫະກິດການຄ້າ ຂາເຂົ້າ,ບຸກຄົນ ຫລື ນິຕິບຸກຄົນທີ່ກ່ຽວຂ້ອງ ຕ້ອງແຈ້ງລາຍການສິນຄ້າ ທີ່ຕົນມີຈຸດປະສົງດຳເນີນ ຢ່າງລະອຽດ, ຊັດເຈນ. ລາຍການສິນຄ້າດັ່ງກ່າວ ອາດຈະແມ່ນລາຍການດຽວ ຫລືຫລາຍລາຍການກໍໄດ້ ແຕ່ຕ້ອງໃຫ້ສອດຄ່ອງກັບຄວາມສາມາດຕົວຈິງຂອງຕົນ.

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ຮັບໃບທະບຽນວິສາຫະກິດການຄ້າຂາເຂົ້າຕາມທີ່ໄດ້ກ່າວໄວ້ ໃນວັກ 1 ເທິງນີ້ສາມາດເຮັດທຸລະກິດການຄ້າ ຂາອອກ ສິນຄ້າທຸກປະເພດ, ເວັ້ນເສຍແຕ່ປະເພດສິນຄ້າທີ່ລັດຄວບຄຸມ ຊຶ່ງຕ້ອງຂຶ້ນທະບຽນ ວິສາຫະກິດ ການຄ້າ ຂາອອກ ກ່ອນ, ປະເພດສິນຄ້າທີ່ລັດເກືອດຫ້າມ ຫລື ປະເພດສິນຄ້າ ທີ່ລະບຽບ ກົດໝາຍ ໄດ້ກຳນົດໄວ້ຢ່າງອື່ນ.

ສຳລັບຜູ້ນຳເຂົ້າສິນຄ້າສະເພາະຕາມທີ່ໄດ້ບົ່ງໄວ້ໃນ ມາດຕາ 9 ວັກ 2 ຂອງດຳລັດສະບັບນີ້ ຕ້ອງແຈ້ງ ລາຍການສິນຄ້າ ທີ່ສາມາດນຳເຂົ້າໄວ້ໃນໃບທະບຽນວິສາຫະກິດຂອງຕົນ.

ມອບໃຫ້ກະຊວງການຄ້າກຳນົດປະເພດສິນຄ້າຂາອອກ ທີ່ຕ້ອງຂໍຂຶ້ນທະບຽນວິສາຫະກິດ ການຄ້າຂາອອກ.

ມາດຕາ 17. ຜົນສະທ້ອນຂອງການບໍ່ເຄື່ອນໄຫວທຸລະກິດ

ຫົວໜ່ວຍທຸລະກິດການຄ້າ ຂາອອກ, ຂາເຂົ້າ ທີ່ບໍ່ເຄື່ອນໄຫວທຸລະກິດ ຕິດຕໍ່ກັນ ໜຶ່ງປີ ນັບແຕ່ມື້ໄດ້ຮັບຂຶ້ນທະບຽນວິສາຫະກິດເປັນຕົ້ນໄປ ຈະເຮັດໃຫ້ທະບຽນວິສາຫະກິດ ຂອງຫົວໜ່ວຍທຸລະກິດດັ່ງກ່າວຕົກໄປ ເວັ້ນເສຍແຕ່ໄດ້ແຈ້ງເຫດຜົນອັນສົມຄວນໃຫ້ຂະແໜງການຄ້າຊາບ ກ່ອນກຳນົດເວລາໜຶ່ງປີນັ້ນຈະ ສິ້ນສຸດລົງ.

## ໝວດທີ V
## ການນຳເຂົ້າ

ມາດຕາ 18. ການນຳເຂົ້າຂອງຫົວໜ່ວຍທຸລະກິດການຄ້າ ຂາເຂົ້າ

ການນຳເຂົ້າສິນຄ້າຂອງບັນດາຫົວໜ່ວຍທຸລະກິດ ການຄ້າຂາເຂົ້າຕ້ອງປະຕິບັດຕາມເງື່ອນໄຂລຸ່ມນີ້:

- ນຳເຂົ້າສິນຄ້າຕາມລາຍການ ຫລື ປະເພດສິນຄ້າ ທີ່ບົ່ງໄວ້ໃນໃບທະບຽນວິສາຫະກິດຂອງຕົນ;
- ມີເອກະສານສັນຍາ ຊື້ຂາຍ ກັບຄູ່ຄ້າຕ່າງປະເທດ.

ສຳລັບການນຳເຂົ້າສິນຄ້າຄວບຄຸມນັ້ນ ຫົວໜ່ວຍທຸລະກິດການຄ້າຂາເຂົ້າ ຕ້ອງປະຕິບັດຕາມລະບຽບການກ່ຽວກັບການຄວບຄຸມສິນຄ້າແຕ່ລະປະເພດ.

**ມາດຕາ 19. ການນຳເຂົ້າຂອງຜູ້ນຳເຂົ້າສິນຄ້າສະເພາະ**

ຜູ້ນຳເຂົ້າສິນຄ້າຕາມເປົ້າໝາຍສະເພາະ ມີສິດນຳເຂົ້າວັດຖຸປະກອບ, ພາຫະນະການຜະລິດ, ວັດຖຸດິບ ທີ່ນຳໃຊ້ໂດຍກົງເຂົ້າໃນການຜະລິດ - ທຸລະກິດຂອງຕົນ ຕາມແຜນການທີ່ ຂະແໜງການກ່ຽວຂ້ອງໄດ້ ຮັບຮອງເອົາ.

**ມາດຕາ 20. ຂັ້ນຕອນການນຳເຂົ້າ**

ຫົວໜ່ວຍທຸລະກິດການຄ້າຂາເຂົ້າ ແລະ ຜູ້ນຳເຂົ້າສິນຄ້າຕາມເປົ້າໝາຍສະເພາະ ທີ່ມີເງື່ອນໄຂຄົບຖ້ວນຕາມດຳລັດສະບັບນີ້ ສາມາດປະກອບເອກະສານນຳເຂົ້າສິນຄ້າ ແລ້ວຍື່ນໂດຍກົງຢູ່ດ່ານ ເພື່ອນຳເຂົ້າສິນຄ້າ.

**ມາດຕາ 21. ການນຳເຂົ້າ ຂອງຜູ້ນຳເຂົ້າເຄື່ອງຂອງ**

ການນຳເຂົ້າຂອງຜູ້ນຳເຂົ້າເຄື່ອງຂອງ ຕ້ອງປະຕິບັດຕາມລາຍການ, ຂອບເຂດ, ປະເພດ, ຈຳນວນເຄື່ອງຂອງຕາມທີ່ກົດໝາຍພາສີ ໄດ້ກຳນົດໄວ້.

## ໝວດທີ VI
## ການສົ່ງອອກ

**ມາດຕາ 22. ການສົ່ງອອກຂອງຫົວໜ່ວຍທຸລະກິດການຄ້າຂາອອກ**

ການສົ່ງອອກສິນຄ້າ ຂອງບັນດາຫົວໜ່ວຍທຸລະກິດການຄ້າ ຂາອອກຕ້ອງມີເອກະສານສັນຍາ ຊື້ຂາຍ ກັບຄູ່ຄ້າຕ່າງປະເທດ.

ສຳລັບການສົ່ງອອກສິນຄ້າຄວບຄຸມນັ້ນ ຫົວໜ່ວຍທຸລະກິດການຄ້າຂາອອກ ຕ້ອງປະຕິບັດຕາມລະບຽບການກ່ຽວກັບການຄວບຄຸມສິນຄ້າແຕ່ລະປະເພດ.

**ມາດຕາ 23. ຂັ້ນຕອນການສົ່ງອອກ**

ຜູ້ສົ່ງອອກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງດຳລັດສະບັບນີ້ ສາມາດປະກອບ ເອກະສານສົ່ງອອກສິນຄ້າ ແລ້ວ ຍື່ນໂດຍກົງຢູ່ດ່ານເພື່ອສົ່ງສິນຄ້າອອກ.

**ມາດຕາ 24. ການນຳອອກຂອງຜູ້ນຳອອກເຄື່ອງຂອງ**

ການນຳອອກຂອງຜູ້ນຳອອກເຄື່ອງຂອງໃຫ້ປະຕິບັດຕາມທີ່ກົດໝາຍພາສີ ໄດ້ກຳນົດໄວ້.

## ໝວດທີ VII
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 25. ການລະເມີດລະບຽບກ່ຽວກັບສິນຄ້າຄວບຄຸມ**

ບຸກຄົນ ຫລື ນິຕິບຸກຄົນ ທີ່ໄດ້ລະເມີດລະບຽບການກ່ຽວກັບສິນຄ້າຄວບຄຸມ ນອກຈາກຈະບໍ່ມີສິດນຳເຂົ້າຫລື ສົ່ງອອກສິນຄ້າຂອງຕົນແລ້ວ ຍັງຈະຖືກປັບໄໝ ຫລື ຖືກດຳເນີນຄະດີຕາມກົດໝາຍ.

**ມາດຕາ 26. ການລະເມີດອື່ນໆ**

ທຸກການລະເມີດຂອງຜູ້ນຳເຂົ້າ, ຜູ້ສົ່ງອອກ, ຂອງເຈົ້າໜ້າທີ່, ພະນັກງານລັດ ທີ່ກ່ຽວຂ້ອງເຊັ່ນ: ການປອມແປງເອກະສານ, ການສວຍໃຊ້ໜ້າທີ່ຕຳແໜ່ງ ລ້ວນແຕ່ຕ້ອງຮັບຜິດຊອບ ຕໍ່ໜ້າກົດໝາຍ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 27. ການຈັດຕັ້ງປະຕິບັດ**

ສຳນັກງານນາຍົກລັດຖະມົນຕີ, ກະຊວງການຄ້າ, ກະຊວງການເງິນ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີໜ້າທີ່ຈັດຕັ້ງ ປະຕິບັດດຳລັດສະບັບນີ້ ໃຫ້ປາກົດຜົນເປັນຈິງໃນຂອບເຂດທົ່ວປະເທດ.

**ມາດຕາ 28. ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ທຸກຂໍ້ກຳນົດ ລະບຽບການ ທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນະຄອນວຽງຈັນ, ວັນທີ..11-10-2001

**ນາຍົກລັດຖະມົນຕີ,**

**ບຸນຍັງ ວໍລະຈິດ**